ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ 0001

ນະຄອນຫຼວງວຽງຈັນ, ວັນທີ: 31 ສິງຫາ 2026

ຮຽນ: - ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
- ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ,
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ເຈ້ງມະຕິກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 1/2026 ຄັ້ງວັນທີ 31 ສິງຫາ 2026.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 27/ຄຄຊ, ລົງ ວັນທີ 29 ມີນາ 2022;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 1/2026 ຂອງບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ ("ລອຊ" ຫຼື "ບໍລິສັດ") (ຕໍ່ໄປເອີ້ນວ່າ"ກອງປະຊຸມ") ແມ່ນໄດ້ຈັດຂຶ້ນໃນວັນທີ 31 ສິງຫາ 2026 ເວລາ 08:00 ໂມງ ທີ່ຫ້ອງການຂອງບໍລິສັດ. ໂດຍການເປັນປະທານຂອງທ່ານ ນາງ ຢຸກີ ສະ ກອດ , ປະທານສະພາບໍລິຫານ, ພ້ອມດ້ວຍຄະນະສະພາບໍລິຫານອີກ 4 ທ່ານ ແລະ ຄະນະບໍລິຫານເປັນ ຜູ້ສັງເກດການ.

ໃນກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆ ແລະ ມີມະຕິທີ່ຕົກລົງ ດັ່ງລຸ່ມນີ້:

- ເຫັນດີກຳນົດເອົາວັນທີ 09 ກັນຍາ 2026 ເປັນວັນປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອ ກຳນົດລາຍຊື່ຜູ້ຖືຮຸ້ນທີ່ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025.
- ເຫັນດີໃຫ້ມີການຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ໃນວັນທີ 25 ກັນຍາ 2026 ເວລາ 10:30 ນາທີ (ການລົງທະບຽນເລີ່ມຕົ້ນ 9:30) ທີ່ ບໍລິສັດລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ຊັ້ນ 6, ຕຶກ NNN, ຖະໜົນນຸວິຈັນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ. ຊຶ່ງວາລະທີ່ສະ ເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ພິຈາລະນາ ແລະ ຮັບຮອງ ມີດັ່ງນີ້:
  (1) ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024;
  (2) ພິຈາລະນາ ແລະ ຮັບຮອງ ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025;
  (3) ພິຈາລະນາ ແລະ ຮັບຮອງ ການຮັກສາການບໍ່ປ່ຽນແປງສະພາບໍລິຫານ ແລະ ຜູ້ອຳນວຍການ ບໍລິສັດ
  (4) ພິຈາລະນາ ແລະ ຮັບຮອງ ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານ ລາຍງານການເງິນ ປະຈຳປີ 2025 ຂອງບໍລິສັດ;
  (5) ພິຈາລະນາ ແລະ ຮັບຮອງ ການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ສຳລັບປີສິ້ນສຸດວັນທີ 31 ທັນວາ 2025. ຂໍ້ມູນລາຍລະອຽດຂອງການຈ່າຍເງິນປັນ ຜົນມີດັ່ງນີ້:

- ວັນທີຊຳລະ: ວັນທີ 27 ມິຖຸນາ 2025
- ມື້ປິດປຶ້ມກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຫຸ້ນສາມັນ ປະຈຳປີ ແລະ ສິດຮັບເງິນປັນຜົນ: ວັນທີ 11 ເມສາ 2025
- ເງິນປັນຜົນ: 600 ກີບ/ຮຸ້ນ
- ຮຸ້ນທັ້ງໝົດ: 301,500,000 ຮຸ້ນ
- ຈຳນວນທັ້ງໝົດ : 180,900,000,000 ກີບ

(6) ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດ ປະຈຳປີ 2026 ຂອງບໍລິສັດ;

(7) ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບພາຍນອກ ບໍລິສັດ Ernst & Young Lao Co., Ltd ເປັນຜູ້ກວດສອບຂອງບໍລິສັດ ປະຈຳປີ 2026;

(8) ພິຈາລະນາ ແລະ ຮັບຮອງ ການກູ້ຢືມເງິນຈາກທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນອື່ນໆ ໃນສະກຸນເງິນກີບຈຳນວນ 150,000,000,000 - 200,000,000,000 ກີບ ແລະ ສະກຸນເງິນໂດລາຈຳນວນ15,000,000 - 40,000,000 ໂດລາ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ທ່ານ Yuki Scott